ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມສຳມະນາ ລະດົມຄຳຄິດຄຳເຫັນເປີດກວ້າງຕໍ່ "ຮ່າງ ຄູ່ມືມາດຕະຖານການຈັດໝວດໝູ່ກິດຈະກຳທຸລະກິດສີຂຽວ ສຳລັບ ສປປ ລາວ"

ໃນວັນທີ 22 ມັງກອນ 2026 ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ອົງການການເງິນສາກົນ (IFC) ໄດ້ຮ່ວມກັນຈັດກອງປະຊຸມສຳມະນາ ຢູ່ທີ່ໂຮງແຮມ Crown Plaza ນະຄອນຫຼວງວຽງຈັນ ເພື່ອລະດົມຄຳເຫັນເປີດກວ້າງຕໍ່ **ຮ່າງຄູ່ມືມາດຕະຖານ ການຈັດໝວດໝູ່ ກິດຈະກຳທຸລະກິດສີຂຽວ ສຳລັບ ສປປ ລາວ (Laos Green Finance Taxonomy)** ໂດຍການໃຫ້ກຽດເປັນປະທານຂອງ ທ່ານ ສຸລິສັກ ທຳມະວົງ, ຮອງຜູ້ວ່າການ ທຫລ ແລະ ທ່ານ ນາງ Elvira Morella, ຫົວໜ້າໜ່ວຍງານໃຫ້ຄຳປຶກສາດ້ານວິຊາການ ແລະ ເສດຖະກິດ, ຂົງເຂດອາຊີຕາເວັນອອກ ແລະ ປາຊີຟິກ, ອົງການ IFC; ໃນກອງປະຊຸມໃນຄັ້ງນີ້ ໄດ້ມີບັນດາພາກສ່ວນທີ່ກ່ຽວຂ້ອງ ຈາກບັນດາກົມພາຍໃນ ທຫລ, ກະຊວງ-ອົງການ, ທະນາຄານທຸລະກິດ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ແລະ ພາກສ່ວນອື່ນໆ ເຂົ້າຮ່ວມ ຫຼາຍກວ່າ 100 ທ່ານ.



ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ ເພື່ອເປັນການແລກປ່ຽນຄວາມຄິດເຫັນທີ່ຕິດພັນຕໍ່ ຮ່າງຄູ່ມືມາດຕະຖານການຈັດໝວດໝູ່ກິດຈະກຳທຸລະກິດສີຂຽວ ສຳລັບ ສປປ ລາວ ຊຶ່ງຈະເປັນໜຶ່ງໃນເຄື່ອງມືທີ່ສຳຄັນໃນການສົ່ງເສີມການເງິນສີຂຽວ ແລະ ຈະນຳໃຊ້ເປັນບ່ອນອີງສຳລັບ ຜູ້ຄຸ້ມຄອງ, ສະຖາບັນການເງິນ ແລະ ບັນດາຜູ້ມີສ່ວນຮ່ວມຕ່າງໆໃນຕະຫຼາດ ເພື່ອກຳນົດວ່າ ກິດຈະກຳໃດ ເປັນກິດຈະກຳສີຂຽວ ແລະ ຍືນຍົງ ຕາມສະພາບເງື່ອນໄຂຕົວຈິງຂອງ ສປປ ລາວ ໂດຍສອດຄ່ອງກັບມາດຕະຖານຂອງ ASEAN ແລະ ສາກົນ.

ນອກຈາກນີ້ ທີ່ປະຊຸມຍັງໄດ້ຮັບຟັງການນຳສະເໜີພາບລວມຂອງຮ່າງຄູ່ມືມາດຕະຖານການຈັດໝວດໝູ່ກິດຈະກຳທຸລະກິດສີຂຽວ ສຳລັບ ສປປ ລາວ, ພ້ອມທັງລົງເລິກຫຼາຍຫົວຂໍ້ທີ່ຕິດພັນ ລວມທັງໝົດ 5 ຫົວຂໍ້ ຈາກຄະນະທີ່ຮັບຜິດຊອບຈັດຕັ້ງປະຕິບັດວຽກງານດັ່ງກ່າວ ພ້ອມທັງໄດ້ມີການແລກປ່ຽນຄຳຄິດຄຳເຫັນ ເຫັນເຊິ່ງກັນ ແລະ ກັນ ຢ່າງກົງໄປກົງມາ ແລະ ເຕັມໄປດ້ວຍບັນຍາກາດທີ່ຟົດຟື້ນ.

ໃນຕອນທ້າຍຂອງກອງປະຊຸມ, ຄະນະປະທານ ໄດ້ຕີລາຄາສູງຕໍ່ຜົນສຳເລັດ, ຊຶ່ງກອງປະຊຸມສຳມະນາ ໃນຄັ້ງນີ້ ໂດຍສະເພາະແມ່ນການສະໜັບສະໜູນຈາກ IFC, ຂະແໜງການ ແລະ ພາກສ່ວນກ່ຽວຂ້ອງທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າ, ບັນດາຄຳຄິດເຫັນຕ່າງໆຈະຖືກນຳມາຄົ້ນຄວ້າປັບປຸງໃສ່ຮ່າງຄູ່ມືມາດຕະຖານ ການຈັດໝວດໝູ່ ກິດຈະກຳທຸລະກິດສີຂຽວ ສຳລັບ ສປປ ລາວ ໃຫ້ຄົບຖ້ວນສົມບູນຍິ່ງຂຶ້ນ, ແນໃສ່ໃຫ້ເຫດເໝາະກັບເງື່ອນໄຂຕ່າງໆຂອງ ສປປ ລາວ, ສອດຄ່ອງກັບມາດຕະຖານຂອງອາຊຽນ ແລະ ສາກົນ.



**ຂ່າວ: ກົມຮ່ວມມືສາກົນ**

**ພາບ: ຫ້ອງການ ທຫລ**